ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

--------------------

ກະຊວງສາທາລະນະສຸກ ເລກທີ: 2580 /ກຊສ.

ນະຄອນຫຼວງວຽງຈັນ, ວັນທີ 12 ພະຈິກ 2003

# ຂໍ້ກໍານົດວ່າດ້ວຍ
# ການຄຸ້ມຄອງຄຸນນະພາບຜະລິດຕະພັນເຄື່ອງສໍາອາງ

- ອີງຕາມ ມາດຕາ15 ຂອງກົດໝາຍວ່າດ້ວຍຢາແລະຜະລິດຕະພັນການແພດ ສະບັບເລກທີ01/ ສພຊ, ລົງວັນທີ 8 ເມສາ 2000 ແລະ ລັດຖະດໍາລັດປະທານປະເທດປະກາດໃຊ້ ເລກທີ 13 /ສປປ, ລົງວັນທີ 22 ພຶດສະພາ 2000.
- ອີງຕາມ ດໍາລັດນາຍົກລັດຖະມົນຕີ ເລກທີ 020/ນຍ, ລົງວັນທີ 9 ມີນາ 1999, ວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງສາທາລະນະສຸກ.
- ອີງຕາມ ການຄົ້ນຄ້ວາ ແລະ ສະເໜີຂອງກົມອາຫານ ແລະ ຢາ.

**ລັດຖະມົນຕີ ວ່າການ ກະຊວງສາທາລະນະສຸກຕົກລົງອອກຂໍ້ກໍານົດ :**

## ໝວດທີ I
## ຫຼັກການທົ່ວໄປ

**ມາດຕາ 1. ຈຸດປະສົງ**

ຂໍ້ກໍານົດສະບັບນີ້ກໍານົດຫຼັກການ, ລະບຽບການ ແລະ ມາດຕະການຕ່າງໆ ໃນການຄຸ້ມຄອງ ແລະ ສົ່ງເສີມຜະລິດຕະພັນເຄື່ອງສໍາອາງທີ່ຜະລິດ, ນໍາເຂົ້າ-ສົ່ງອອກ ແລະ ຈໍາໜ່າຍ ພາຍໃນປະເທດໃຫ້ມີຄຸນນະພາບ ແລະ ມາດຕະຖານ ແນໃສ່ຮັບປະກັນຄວາມປອດໄພແກ່ຜູ້ຊົມໃຊ້.

**ມາດຕາ 2. ລະດັບຄາດໝາຍ**

ການຈັດຕັ້ງປະຕິບັດຂໍ້ກໍານົດສະບັບນີ້ ຈະເຮັດໃຫ້ຜູ້ຊົມໃຊ້ມີຄວາມປອດໄພ, ການດໍາເນີນທຸລະກິດມີຄວາມເປັນລະບຽບຮຽບຮ້ອຍ ແລະ ເປັນບ່ອນອີງໃຫ້ແກ່ພະນັກງານທີ່ມີໜ້າທີ່ກ່ຽວຂ້ອງຂອງລັດແຕ່ລະຂັ້ນໃນການຄຸ້ມຄອງ ແລະ ກວດກາຄຸນນະພາບຜະລິດຕະພັນເຄື່ອງສໍາອາງ.

**ມາດຕາ 3. ຄວາມໝາຍ ຄໍາສັບທີ່ນໍາໃຊ້ໃນຂໍ້ກໍານົດສະບັບນີ້**

- ຜູ້ອະນຸຍາດ: ແມ່ນກົມອາຫານ ແລະ ຢາ ກະຊວງສາທາລະນະສຸກ, ພະແນກສາທາລະນະສຸກ ແຂວງ, ນະຄອນຫຼວງ ແລະ ເຂດພິເສດ;
- ຜະລິດຕະພັນເຄື່ອງສໍາອາງ: ໝາຍເຖິງວັດຖຸທີ່ໃຊ້ສໍາລັບ ທາ, ຖູ, ນວດ, ໂຣຍ, ພົ່ນ, ຢອດໃສ່, ອົບ ຫຼື ກະທໍາ ດ້ວຍວິທີໃດໜຶ່ງຕໍ່ສ່ວນໃດສ່ວນໜຶ່ງພາຍນອກຂອງຮ່າງກາຍຂອງຄົນ ເພື່ອຄວາມສະອາດສວຍງາມ ຫຼື ສົ່ງເສີມໃຫ້ເກີດຄວາມສວຍງາມ ຊຶ່ງລວມທັງວັດຖຸທີ່ມີຈຸດປະສົງໃຊ້ເປັນສ່ວນປະສົມໃນການຜະລິດເຄື່ອງສໍາອາງໂດຍສະເພາະ ຫຼື ວັດຖຸອື່ນ ທີ່ກະຊວງສາທາລະນະສຸກກໍານົດໃຫ້ເປັນເຄື່ອງສໍາອາງ ແຕ່ບໍ່ ໄດ້ກວມເອົາເຄື່ອງປະດັບເອ້;
- ພາຍນອກຂອງຮ່າງກາຍ: ໝາຍເຖິງ ເທິງຜິວໜັງ, ຜົ້ງປາກ, ເລັບ, ຜົມ ແລະ ອື່ນໆ
- ເຄື່ອງປະດັບເອ້: ໝາຍເຖິງ ສາຍສ້ອຍ, ຕຸ້ມຫູ, ໂມງ, ເສື້ອຜ້າ ແລະ ອື່ນໆ;
- ເຄື່ອງບັນຈຸຫຸ້ມຫໍ່: ແມ່ນວັດຖຸໃດໜຶ່ງທີ່ໃຊ້ບັນຈຸ ຫຼື ຫຸ້ມຫໍ່ຜະລິດຕະພັນເຄື່ອງສໍາອາງ ໂດຍສະເພາະ;
- ສະຫຼາກ: ແມ່ນຮູບ, ຮອຍປະດິດ ຫຼື ຂໍ້ຄວາມໃດໜຶ່ງ ແນະນໍາກ່ຽວກັບເຄື່ອງສໍາອາງ ທີ່ຕິດໃສ່ ຫຼື ສອດໄວ້ໃນເຄື່ອງບັນຈຸຫຸ້ມຫໍ່ ຊຶ່ງລວມເຖິງເອກະສານ ຫຼື ຄູ່ມືເພື່ອໃຊ້ສໍາລັບແນະນໍາຜະລິດຕະພັນ ເຄື່ອງສໍາອາງນັ້ນໆ;

- ຜະລິດ: ແມ່ນການປຸງແຕ່ງ ຫຼື ການດຳເນີນການປະສົມ, ປ່ຽນຮູບ, ແປສະພາບ, ແບ່ງບັນຈຸ ຫຼື ປ່ຽນເຄື່ອງບັນຈຸຫຸ້ມຫໍ່;
- ນຳເຂົ້າ: ແມ່ນການນຳເຂົ້າ ຫຼື ສັ່ງເຂົ້າມາໃນ ສ.ປ.ປ.ລາວ ຕາມການອະນຸຍາດຈາກຜູ້ອະນຸຍາດ;
- ຈຳໜ່າຍ: ແມ່ນການຂາຍ, ແຈກຢາຍ ຫຼື ແລກປ່ຽນເພື່ອຜົນປະໂຫຍດໃນທາງການຄ້າ ແລະລວມທັງການມີໄວ້ໃນຄອບຄອງເພື່ອຂາຍ;
- ສະຖານທີ່: ແມ່ນທີ່ຕັ້ງຂອງອາຄານ ຫຼື ພາກສ່ວນໃດໜຶ່ງຂອງອາຄານ ແລະ ລວມທັງບໍລິເວນ ຂອງສະຖານທີ່ໆໃຊ້ໃນການດຳເນີນທຸລະກິດ;
- ຜູ້ປະກອບການ: ແມ່ນຜູ້ທີ່ໄດ້ຮັບອະນຸຍາດ ໃຫ້ດຳເນີນທຸລະກິດ ກ່ຽວກັບຜະລິດຕະພັນເຄື່ອງສຳອາງ ໃນນີ້ ໝາຍຄວາມລວມເຖິງຜູ້ຈັດການ ຫຼື ຜູ້ຕາງໜ້າ, ນິຕິບຸກຄົນ ຊຶ່ງເປັນຜູ້ດຳເນີນທຸລະກິດນັ້ນດ້ວຍ;
- ເຄື່ອງສຳອາງຄວບຄຸມ: ແມ່ນຜະລິດຕະພັນເຄື່ອງສຳອາງ ທີ່ມີວັດຖຸເຄມີຄວບຄຸມ ເປັນສ່ວນປະກອບຕາມການກຳນົດຂອງກະຊວງສາທາລະນະສຸກ.

## ໝວດທີ II

## ສິດ ແລະ ໜ້າທີ່ຂອງຜູ້ອະນຸຍາດ

### ມາດຕາ 4. ອົງການຄຸ້ມຄອງ

ອົງການຄຸ້ມຄອງ ແລະ ກວດກາຄຸນະພາບ ຜະລິດຕະພັນເຄື່ອງສຳອາງ ປະກອບມີ 2 ຂັ້ນຄື:

1. ຂັ້ນສູນກາງ : ກົມອາຫານ ແລະ ຢາ, ກະຊວງສາທາລະນະສຸກ.
1. ຂັ້ນແຂວງ: ພະແນກສາທາລະນະສຸກແຂວງ, ນະຄອນຫຼວງ ແລະ ເຂດພິເສດ.

### ມາດຕາ 5. ສິດ ແລະ ໜ້າທີ່ ຂອງຜູ້ອະນຸຍາດແຕ່ລະຂັ້ນ.

ເພື່ອຄຸ້ມຄອງ ແລະ ກວດກາ ຄຸນນະພາບ ຜະລິດຕະພັນເຄື່ອງສຳອາງ ໃຫ້ມີປະສິດທິຜົນ ແລະ ປອດໄພ, ຜູ້ອະນຸຍາດແຕ່ລະຂັ້ນມີສິດ ແລະ ໜ້າທີ່ ດັ່ງນີ້ :

**1.** ຂັ້ນສູນກາງ

- ອອກລະບຽບການ, ກຳນົດມາດຕະຖານ, ຈັດປະເພດ-ບັນຊີ ຜະລິດຕະພັນເຄື່ອງສຳອາງ, ເຄື່ອງສຳ ອາງຄວບຄຸມພິເສດ, ວັດຖຸເຄມີຄວບຄຸມ ແລະ ຕ້ອງຫ້າມ ແລະ ອອກແຈ້ງການ ຕ່າງໆ.
- ຂຶ້ນທະບຽນຜະລິດຕະພັນເຄື່ອງສຳອາງ.
- ອະນຸຍາດໃຫ້ຜະລິດ, ນຳເຂົ້າ-ສົ່ງອອກ ແລະ ຈຳໜ່າຍ.
- ຕິດຕາມ, ກວດກາ ຄຸນນະພາບກ່ອນ ແລະ ຫຼັງການຈຳໜ່າຍ ແລະ ເກັບຜະລິດຕະພັນຕົວແບບ ເພື່ອວິໄຈ.
- ຄຸ້ມຄອງ ແລະ ກວດກາ ເນື້ອໃນໂຄສະນາ ຜະລິດຕະພັນເຄື່ອງສຳອາງ.
- ຖອນ ຫຼື ຍົກເລີກຜະລິດຕະພັນເຄື່ອງສຳອາງ ທີ່ເປັນອັນຕະລາຍຕໍ່ຜູ້ຊົມໃຊ້ .
- ຮັບ ແລະ ພິຈາລະນາຄຳຮ້ອງຟ້ອງ ກ່ຽວກັບບັນຫາຄຸນນະພາບຜະລິດຕະພັນເຄື່ອງສຳອາງ.

**2.** ຂັ້ນແຂວງ:

2. ອະນຸຍາດໃຫ້ຜະລິດ, ນຳເຂົ້າ-ສົ່ງອອກ ແລະ ຈຳໜ່າຍ ຕາມການມອບໝາຍ ຈາກກະຊວງສາທາລະນະສຸກ.
3. ຕິດຕາມ ແລະ ກວດກາ ຄຸນນະພາບກ່ອນ ແລະຫຼັງການຈຳໜ່າຍ ແລະເກັບຜະລິດຕະພັນຕົວແບບ.
4. ຄຸ້ມຄອງ ແລະ ກວດກາ ເນື້ອໃນໂຄສະນາ ຜະລິດຕະພັນເຄື່ອງສຳອາງ.
5. ຮັບ ແລະ ພິຈາລະນາ ຄຳຮ້ອງຟ້ອງ ກ່ຽວກັບບັນຫາຄຸນນະພາບ ຜະລິດຕະພັນເຄື່ອງສຳອາງ.

## ໝວດທີ III

## ການດຳເນີນທຸລະກິດ ກ່ຽວກັບຜະລິດຕະພັນເຄື່ອງສຳອາງ

**ມາດຕາ 6.** ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງໃດໜຶ່ງ ທີ່ມີຈຸດປະສົງຢາກດຳເນີນທຸລະກິດກ່ຽວກັບການຜະລິດ, ນຳເຂົ້າ ແລະ ຈຳໜ່າຍຜະລິດຕະພັນເຄື່ອງສຳອາງ ຕ້ອງໄດ້ຍື່ນຄຳຮ້ອງ ເພື່ອຂໍອະນຸຍາດຢ່າງເປັນທາງການຈາກຂະແໜງການສາທາລະນະສຸກ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ ແລະ ຕ້ອງໄດ້ນຳເອົາຜະລິດຕະພັນຂອງຕົນທີ່ຈະຜະລິດ, ນຳເຂົ້າ ແລະ ຈຳໜ່າຍ ມາຂຶ້ນ ທະບຽນຢູ່ກົມອາຫານ ແລະ ຢາ, ກະ ຊວງສາທາລະນະສຸກ.

**ມາດຕາ 7. ເງື່ອນໄຂຂອງການດໍາເນີນທຸລະກິດ ການຜະລິດເຄື່ອງສໍາອາງ**

ບຸກຄົນ ຫຼື ການຈັດຕັ້ງໃດຫນຶ່ງ ທີ່ມີຈຸດປະສົງຢາກດໍາເນີນທຸລະກິດກ່ຽວກັບ ການຜະລິດເຄື່ອງສໍາອາງ ,ໂຮງງານຕ້ອງມີເງື່ອນໄຂ ຄືດັ່ງນີ້ :

- ມີວິຊາການທີ່ເຫມາະສົມ ເຊັ່ນ: ມີເພສັດຊະກອນ ຫຼື ນັກເຄມີສາດຫຼືນັກວິຊາການທີ່ມີປະສົບການດ້ານນີ້.
- ມີສິ່ງອໍານວຍຄວາມສະດວກທີ່ຈໍາເປັນ ເພື່ອຮັບປະກັນມາດຕະຖານການຜະລິດທີ່ດີ ເຊັ່ນ: ມີຫ້ອງຜະລິດ, ມີສາງເກັບມ້ຽນທີ່ໄດ້ມາດຕະຖານ ຕາມທາງການວາງອອກ ແລະ ອຸປກອນຮັບໃຊ້ທີ່ຈໍາເປັນອື່ນໆ.
- ມີລະບົບ ປົກປັກຮັກສາ ຄວາມປອດໄພ ແລະ ສິ່ງແວດລ້ອມ.
- ກ່ອນຈະຜະລິດເຄື່ອງສໍາອາງ ຕ້ອງເຮັດຄໍາຮ້ອງຂໍອະນຸຍາດຜະລິດທົດລອງ ຊຶ່ງກໍານົດລາຍ ການຜະລິດ ພ້ອມດ້ວຍສູດຕໍາລາ ແລະ ຂັ້ນຕອນການຜະລິດ ຕໍ່ກົມອາຫານ ແລະ ຢາ, ກະຊວງສາທາລະນະສຸກ.

**ມາດຕາ 8. ການນໍາເຂົ້າຜະລິດຕະພັນເຄື່ອງສໍາອາງ.**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງໃດໜຶ່ງທີ່ມີຈຸດປະສົງ ຢາກດໍາເນີນທຸລະກິດກ່ຽວກັບກາ ນໍາເຂົ້າຜະລິດຕະພັນເຄື່ອງສໍາອາງ ຕ້ອງມີບາງເງື່ອນໄຂ ດັ່ງນີ້ :

- ເປັນບຸກຄົນ ຫຼື ນິຕິບຸກຄົນທີ່ມີປະສົບປະການ ແລະ ມີທະບຽນວິສະຫະກິດ.
- ສ້າງບັນຊີເຄື່ອງສໍາອາງ ທີ່ມີເຄມີຄວບຄຸມ ເພື່ອຂໍອະນຸມັດນໍາເຂົ້າຈາກຂະແຫນງການສາທາລະນະສຸກ.
- ມີເງື່ອນໄຂ ແລະ ສິ່ງອໍານວຍຄວາມສະດວກເພື່ອເກັບຮັກສາ ແລະ ຂົນສົ່ງຜະລິດຕະພັນເຄື່ອງສໍາອາງ ໃຫ້ຢູ່ໃນສະພາບດີ.

ຜະລິດຕະພັນເຄື່ອງສໍາອາງຄວບຄຸມພິເສດ ທີ່ຈະນໍາເຂົ້າມາຈໍາໜ່າຍຢູ່ ສປປ ລາວ ຕ້ອງ ໄດ້ຈົດທະບຽນຢູ່ກົມອາຫານ ແລະ ຢາ, ກະຊວງສາທາລະນະສຸກ. ທຸກການນໍາເຂົ້າຜະລິດຕະພັນດັ່ງກ່າວ ຕ້ອງໄດ້ຮັບການກວດກາຈາກຂະແໜງສາທາລະນະສຸກ ເສຍກ່ອນ.

**ມາດຕາ 9. ການຈໍາໜ່າຍ :**

ການຈໍາໜ່າຍຜະລິດຕະພັນເຄື່ອງສໍາອາງ ສາມາດດໍາເນີນການໄດ້ຢູ່ຮ້ານຂາຍຢາ, ຮ້ານເສີມສວຍ ຫຼື ຕາມຮ້ານຄ້າທົ່ວໄປ ທີ່ໄດ້ຮັບອະນຸຍາດ ຢ່າງຖືກຕ້ອງ.

ຜູ້ດໍາເນີນທຸລະກິດກ່ຽວກັບຜະລິດຕະພັນເຄື່ອງສໍາອາງ ຕ້ອງຮັບຜິດຊອບຕໍ່ຄຸນນະພາບ ແລະ ຄວາມປອດໄພຂອງຜະລິດຕະພັນຂອງຕົນຕໍ່ໜ້າກົດໝາຍ.

**ມາດຕາ 10. ການໂຄສະນາ :**

ບຸກຄົນ ຫຼື ການຈັດຕັ້ງໃດໜຶ່ງ ທີ່ມີຈຸດປະສົງຢາກໂຄສະນາກ່ຽວກັບຜະລິດຕະພັນເຄື່ອງສໍາອາງ ຕ້ອງໄດ້ຮັບອະນຸຍາດ ແລະ ປະຕິບັດຕາມຂໍ້ກໍານົດວ່າດ້ວຍການໂຄສະນາ ທີ່ກະຊວງສາທາລະນະສຸກວາງອອກ.

- ການໂຄສະນາຕ້ອງໃຊ້ຖ້ອຍຄໍາທີ່ເປັນທໍາຕໍ່ຜູ້ບໍລິໂພກ, ບໍ່ໃຊ້ຖ້ອຍຄໍາທີ່ອາດກໍ່ໃຫ້ເກີດຄວາມເຊື່ອມເສຍຕໍ່ສັງຄົມສ່ວນລວມ.

## ຫມວດທີ IV
## ການຂຶ້ນທະບຽນຜະລິດຕະພັນເຄື່ອງສໍາອາງ

**ມາດຕາ 11. ການຂຶ້ນທະບຽນຜະລິດຕະພັນເຄື່ອງສໍາອາງ**

1. ຜະລິດຕະພັນເຄື່ອງສໍາອາງທີ່ຕ້ອງໄດ້ຂຶ້ນທະບຽນ ແມ່ນຜະລິດຕະພັນທີ່ມີວັດຖຸເຄມີເປັນສ່ວນປະກອບ ຕາມການກໍານົດຂອງກະຊວງສາທາລະນະສຸກ;
2. ການປະກອບເອກະສານໃນການຂໍຂຶ້ນທະບຽນ.

   ຜູ້ທີ່ມີຈຸດປະສົງ ຢາກຂຶ້ນທະບຽນຜະລິດຕະພັນເຄື່ອງສໍາອາງ ຕ້ອງຍື່ນໃບຄໍາຮ້ອງຂໍຂຶ້ນທະບຽນຕໍ່ກົມອາຫານແລະຢາ ພ້ອມດ້ວຍເອກະສານທີ່ຈໍາເປັນ ແລະ ຜະລິດຕະພັນຕົວແບບຄືດັ່ງລຸ່ມນີ້:

   1. ໃບຄໍາຮ້ອງ (ຕາມແບບຟອມ ອອກໃຫ້ໂດຍກົມອາຫານແລະຢາ)
   2. ໃບທະບຽນການຄ້າ / ທຸລະກິດ

3. ໃບຢັ້ງຢືນຄຸນະພາບ ຈາກປະເທດຜູ້ຜະລິດ (ໃບຢັ້ງຢືນການຜະລິດທີ່ດີ, ການວິໃຈ, ການຂຶ້ນທະບຽນ) ທີ່ຍັງມີຜົນບັງຄັບໃຊ້.
4. ໃບຢັ້ງຢືນການຈໍາຫນ່າຍຈາກປະເທດຜູ້ຜະລິດ ທີ່ຍັງມີຜົນບັງຄັບໃຊ້.
5. ຜະລິດຕະພັນຕົວແບບ (ຈໍານວນຕາມການກໍານົດ) ທີ່ຢູ່ໃນຫົວໜ່ວຍມັດຫໍ່ເດີມ.

**ມາດຕາ 12. ເນື້ອໃນຂອງສະຫລາກ**

ຜະລິດຕະພັນເຄື່ອງສໍາອາງ ທີ່ຈະຂໍຂຶ້ນທະບຽນ ຕ້ອງມີສະຫຼາກທີ່ມີເນື້ອໃນຄົບຖ້ວນເປັນພາສາລາວ ຫຼື ພາສາສາກົນທີ່ອ່ານໄດ້ຊັດເຈນ ດັ່ງນີ້:

- ຊື່ຜະລິດຕະພັນເຄື່ອງສໍາອາງຄວບຄຸມ;
- ຊື່ວັດຖຸເຄມີ ທີ່ໃຊ້ເປັນສ່ວນປະກອບສໍາຄັນ ພ້ອມດ້ວຍປະລິມານ;
- ເລກທະບຽນ ທີ່ປະເທດຜູ້ຜະລິດອອກໃຫ້;
- ຊື່ຜູ້ຜະລິດ, ບ່ອນຜະລິດ, ຄັ້ງທີ ແລະ ວັນເດືອນປີຜະລິດ ແລະ ວັນໝົດອາຍຸ;
- ວິທີໃຊ້, ຄໍາເຕືອນ ຫລື ຂໍ້ຫ້າມໃຊ້ ເພື່ອຄວາມປອດໄພ;
- ຂະໜາດບັນຈຸ.

**ມາດຕາ 13. ອາຍຸຂອງໃບຢັ້ງຢືນການຂຶ້ນທະບຽນຜະລິດຕະພັນ ແລະ ການລຶບລ້າງ.**

1. ອາຍຸໃບຢັ້ງຢືນການຂຶ້ນທະບຽນຜະລິດຕະພັນເຄື່ອງສໍາອາງມີ ກໍານົດໃຊ້ 5 ປີນັບແຕ່ມື້ ລົງລາຍເຊັນເປັນຕົ້ນໄປ. ກ່ອນມື້ຫມົດອາຍຸກໍານົດນໍາໃຊ້ຢ່າງຊ້າ 90 ວັນ, ເຈົ້າຂອງຜະລິດຕະພັນ ຕ້ອງໄດ້ຍື່ນໃບຄໍາຮ້ອງເພື່ອຂໍຂຶ້ນທະບຽນໃໝ່ ແລະ ຖ້າຫາກບໍ່ປະຕິບັດຕາມວັນເວລາດັ່ງກ່າວ ໃບຢັ້ງຢືນການຂຶ້ນທະບຽນນັ້ນ ແມ່ນຖືກລຶບລ້າງ;
2. ຜະລິດຕະພັນເຄື່ອງສໍາອາງທີ່ໄດ້ຮັບການ ຂຶ້ນທະບຽນໄວ້ແລ້ວອາດຖືກລຶບລ້າງ, ຖ້າຫາກພົບເຫັນວ່າຜະລິດຕະພັນດັ່ງກ່າວບໍ່ມີຄຸນປະໂຫຍດ ຫລື ບໍ່ມີຄຸນນະພາບ ແລະ ບໍ່ປອດໄພແກ່ຜູ້ຊົມໃຊ້ ຕາມທີ່ໄດ້ຂຶ້ນທະບຽນໄວ້ ຫລື ໃນກໍລະນີບໍລິສັດແມ່ຜູ້ຜະລິດ ປະກາດລຶບລ້າງ.

## ຫມວດທີ V
## ການເສຍ ຄ່າທໍານຽມ ແລະ ຄ່າບໍລິການວິຊາສະເພາະ

**ມາດຕາ 14.** ຜູ້ປະກອບການກ່ຽວກັບຜະລິດຕະພັນເຄື່ອງສໍາອາງ ຕ້ອງໄດ້ເສຍຄ່າທໍານຽມ ແລະ ຄ່າບໍລິການວິຊາສະເພາະດ້ວຍຕົນເອງໃນການວິໃຈຄຸນນະພາບ ຜະລິດຕະພັນ, ໃນການອອກໃບຢັ້ງຢືນ ການຂຶ້ນທະບຽນ ແລະ ອື່ນໆ ຕາມທີ່ທາງການວາງອອກໃນແຕ່ລະໄລຍະ.

1. ຄ່າທໍານຽມການຂຶ້ນທະບຽນ ຕາມກົດລະບຽບຂອງກະຊວງການເງິນວາງອອກ;
2. ຄ່າບໍລິການ ວິຊາສະເພາະຕາມກົດລະບຽບຂອງກະຊວງສາທາລະນະສຸກ.

## ຫມວດທີ VI
## ຂໍ້ຫ້າມ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 15. ຂໍ້ຫ້າມຕ່າງໆ**

1. ຫ້າມບຸກຄົນ ແລະ ການຈັດຕັ້ງໃດຫນຶ່ງ ຜະລິດ ນໍາເຂົ້າ-ສົ່ງອອກ ແລະ ຈໍາຫນ່າຍ ຜະລິດຕະພັນ ເຄື່ອງສໍາອາງ ໂດຍບໍ່ໄດ້ຮັບອະນຸຍາດຈາກ ຂະແໜງການສາທາລະນະສຸກ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ.
2. ຫ້າມບຸກຄົນ ແລະ ການຈັດຕັ້ງໃດໜຶ່ງ ໂຄສະນາເກີນຄວາມເປັນຈິງກ່ຽວກັບສັບພະຄຸນຜະລິດຕະພັນ ເຄື່ອງສໍາອາງ ໂດຍບໍ່ໄດ້ຮັບອະນຸຍາດຈາກຂະແໜງການສາທາລະນະສຸກ ແລະ ຂະແໜງການ ອື່ນທີ່ກ່ຽວຂ້ອງ.
3. ຫ້າມບຸກຄົນ ແລະ ການຈັດຕັ້ງໃດໜຶ່ງ ປອມແປງຜະລິດຕະພັນເຄື່ອງສໍາອາງ ຕາມທີ່ໄດ້ຮັບຢັ້ງຢືນການຂຶ້ນທະບຽນໄວ້ແລ້ວ.

**ມາດຕາ 16. ມາດຕະການຕໍ່ຜູ້ລະເມີດ.**

ຫາກບຸກຄົນໃດລະເມີດຕໍ່ຂໍ້ກໍານົດສະບັບນີ້ຈະຖືກສຶກສາອົບຮົມ, ກ່າວເຕືອນ, ຢຶດຜະລິດຕະພັນ ແລະ ປັບໃໝ ຫລື ຮ້ອງຟ້ອງຕາມລະບຽບ ກົດຫມາຍຂອງບ້ານເມືອງ ຕາມກໍລະນີຫນັກຫລືເບົາ, ໂດຍສະເພາະບັນດາມາດຕາ ດັ່ງຕໍ່ໄປນີ້:

- ລະເມີດມາດຕາ 8 ຈະຖືກສຶກສາອົບຮົມ, ກ່າວເຕືອນ ສະເໜີປິດກິດຈະການຊົ່ວຄາວ ເພື່ອລໍຖ້າ ການອອກອະນຸຍາດ ໃຫ້ຖືກຕ້ອງ.
- ລະເມີດມາດຕາ11: ຄັ້ງທີໜຶ່ງ ຈະຖືກສຶກສາອົບຮົມ, ກ່າວເຕືອນ, ຄັ້ງທີສອງ ຈະຖືກປັບໃໝ 1 ເທົ່າຕົວ ຂອງມູນຄ່າການອອກອະນຸຍາດໂຄສະນາຕາມຂໍ້ກຳນົດວ່າດ້ວຍການຄຸ້ມຄອງການໂຄສະນາ.
- ລະເມີດມາດຕາ12: ຄັ້ງທີໜຶ່ງ ຈະຖືກປັບໃໝ 1ເທົ່າຕົວ ຕາມມູນຄ່າຈົດທະບຽນຜະລິດຕະພັນເຄື່ອງສຳອາງ ແລະ ກ່າວເຕືອນ. ຄັ້ງທີ2 ຈະຖືກປັບໃໝ 3ເທົ່າຕົວ ຕາມມູນຄ່າຈົດທະບຽນຜະລິດຕະພັນເຄື່ອງສຳອາງ ແລະ ປິດກິດຈະການຢ່າງຖາວອນ.

## ໝວດທີ VII
## ບົດບັນຍັດ ສຸດທ້າຍ

**ມາດຕາ 17. ການຈັດຕັ້ງປະຕິບັດ.**

ທຸກອົງການຈັດຕັ້ງທັງພາກລັດ ແລະ ເອກະຊົນທີ່ກ່ຽວຂ້ອງຕ່າງໆ ຈົ່ງໃຫ້ການຮ່ວມມື ແລະ ພ້ອມກັນຈັດຕັ້ງປະຕິບັດ ຕາມຂໍ້ກຳນົດສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 18.** ມອບໃຫ້ກົມອາຫານ ແລະ ຢາເປັນໃຈກາງຮັບຜິດຊອບໃນການຈັດຕັ້ງປະຕິບັດ ແລະ ຜັນຂະຫຍາຍຂໍ້ກຳນົດສະບັບນີ້ ໃຫ້ປະກົດຜົນເປັນຈິງ ໃນຂອບເຂດທົ່ວປະເທດ.

**ມາດຕາ 19.** ຂໍ້ກຳນົດສະບັບນີ້ ມີຜົນບັງຄັບໃຊ້ໄດ້ນັບແຕ່ມື້ ລົງລາຍເຊັນເປັນຕົ້ນໄປ.

ລັດຖະມົນຕີວ່າການກະຊວງສາທາລະນະສຸກ

ດຣ. ປອນເມກ ດາລາລອຍ